## (ເງິນປະກັນ) ແລະ (ເງິນເອົາໄວ້ສ້ອມແປງ)

ເວລາເຊົ່າເຮືອນ, ກ່ອນຈະເຂົ້າໄປຢູ່ ຫຼື ຈະເຊົາເຊົ່າ, ການເຊັນສັນຍາມີຫຼາຍໆຂໍ້. ຢູ່ໃນຄຳແນະນຳນີ້, ໄດ້ກ່າວໄວ້ກ່ຽວກັບ (ເງິນປະກັນ) ແລະ (ເງິນເອົາໄວ້ສ້ອມແປງ)

-ຄຳວ່າ: (ເງິນປະກັນ) ແລະ (ເງິນເອົາໄວ້ສ້ອມແປງ) ນັ້ນ, -ເຮັດໜັງສືເຊົ່າເຮືອນແລ້ວໆ, ຕ້ອງຈ່າຍເງິນປະກັນ ແລະ ເງິນເອົາໄວ້ສ້ອມແປງແລ້ວຈຶ່ງເຂົ້າໄປຢູ່ໄດ້. ນັບແຕ່ເຂົ້າໄປຢູ່,ຈົນເຊົາເຊົ່າ ຂໍ້ຄວນລະວັງ ການຮັກສາເຮືອນຄືແນວໃດ, ຈະອະທິບາຍຢ່າງລະອຽດດັ່ງຕໍ່ໄປນີ້.

## ມູລນິທິ ເຄື່ອນໄຫວບໍ່ຫວັງຜົນກຳໄລ ສູນການຊ່ວຍເຫຼືອຄົນຕ່າງຊາດດ້ານເຮືອນຢູ່ ຄານາກະວ່າ

ສູນກາງຊ່ວຍເຫຼືອຄົນຕ່າງຊາດດ້ານເຮືອນຢູ່, ໄດ້ແປເປັນພາສາລາວ ສຳລັບຜູ້ທີ່ບໍ່ໄດ້ພາສາຍີ່ປຸ່ນ ເວລາຊອກເຊົ່າເຮືອນ. ຈະໃຫ້ຄຳແນະນຳ ແລະຊ່ວຍແກ້ໄຂເວລາມີບັນຫາກັບເຈົ້າຂອງເຮືອນ.





ຊື່ ມູລນິທິ ທີ່ຢູ່ ເບີໂທ ເບີແຟັກ ແລະ ອີ-ແມວ

特定非営利活動法人

かながわ外国人すまいサポートセンター

横浜市中区常盤町 １－7

横浜 YMCA 2階

TEL 045-228-1752

FAX 045-228-1768

e-mail：sumai.sc@sumasen.com

http://www.sumasen.com/


ຢູ່ຕໍ່ໜ້າ ເດີ່ນຢະຄືວ ໂຢໂກຮາມາ

ຈາກ: ໂຢໂກຮາມາ-ເອກິ ຂີ່ສາຍ JR ຫຼື ຂີ່ສາຍ ຊິເອຈິກະເຕັດສຶ, ລົງຄັນໃນ-ເອກິ ແລ້ວຍ່າງໄປ 5 ນາທີ.


## ຈັດພິມອອກ : ປີ 2020 ເດືອນ 2

ຄຳແນະນຳນີ້, ແຂວງຄານາກະວ່າ ໄດ້ມອບໃຫ້ ມູລນິທິ ເຄື່ອນໄຫວບໍ່ຫວັງຜົນຫາກຳໄລ ສູນກາງຊ່ວຍເຫຼືອຄົນຕ່າງຊາດ ດ້ານເຮືອນຢູ ຄານາກະວ່າ ເປັນຜູ້ເຮັດ.

ພະແໜກ ຫ້ອງການທ່ອງທ່ຽວ ຂອງແຂວງຄານາກະວ່າ ໂຢໂກຮາມ່າ-ຊິ ນາກະ-ກຶ ນິຮົງໂອ້ໂດລິ 1

ເບີໂທ 045 – 210 – 1111 ເບີພາຍໃນ 3748 ແລະ ເບີແຟັກ 045 – 212 – 2753

1. ນັບແຕ່ເຮັດສັນຍາເຊົ່າເຮືອນ ຈົນຮອດມື້ເຊົາເຊົ່າເຮືອນ, ໃຫ້ເຂົ້າໃຈຕາມນີ້,

A ການເຮັດສັນຍາເຊົ່າເຮືອນ

B ເງິນປະກັນ ໂອ້ສິກະ-ຟິໂດຊັ່ງ ເປັນຜູ້ເກັບມ້ຽນ

ຕໍ່ໄປນີ້, ເຈົ້າຕ້ອງ ເຮັດກັບ ໂອ້ສິກະ - ຟິໂດຊັ່ງ,

C ກ່ອນຈະເຂົ້າໄປຢູ່ເຮືອນ ຫຼື ຫ້ອງເຊົ່າ ເຈົ້າຕ້ອງໄປກວດເບິ່ງກ່ອນ,
(ບ່ອນໃດເພພັງ ບ່ອນໃດເປື້ອນ ຕ້ອງເບິ່ງກັບ ໂອ້ສິກະ - ຟິໂດຊັ່ງ)

ໜ້າທີ່ເຈົ້າຕ້ອງເປັນຜູ້ເຮັດ ຄືດັ່ງນີ້,

D ເຊົ່າແລ້ວ ຕ້ອງເຂົ້າໄປ (ຢູ່)

E ຖ້າວ່າ: ຈະເຊົາເຊົ່າ ໃຫ້ບອກລ່ວງໜ້າ,
ຈະຍ້າຍອອກຈາກຫ້ອງເຊົ່າ ໃຫ້ບອກ ໂອ້ສິກະ - ຟິໂດຊັ່ງ

F ຈະຍ້າຍອອກຈາກເຮືອນ ຫຼື ຫ້ອງເຊົ່າ ຕ້ອງຂົນເຄື່ອງອອກໃຫ້ໝົດ

G ຫ້ອງເຈົ້າເຊົ່າຢູ່ ຕ້ອງຈັດແປງ ໃຫ້ກັບຄືນສູ່ສະພາບເດີມ

ເຈົ້າຕ້ອງ ເຮັດກັບ ໂອ້ສິກະ - ຟິໂດຊັ່ງ ຄືດັ່ງນີ້,

H ກ່ອນຈະອອກຈາກເຮືອນ ຫຼື ຫ້ອງເຊົ່າ, ຕ້ອງມີການກວດການຳກັນ,
(ບ່ອນໃດເປື້ອນ ບ່ອນໃດເພພັງ ຕ້ອງເບິ່ງນຳກັນກັບ ໂອ້ສິກະ - ຟິໂດຊັ່ງ)

I ຈະຮ້ອງບໍລິສັດ ວິຊາສະເພາະ ມາສ້ອມແປງຫ້ອງຄືນ ໃຫ້ຢູ່ໃນສະພາບເດີມ

J ບໍລິສັດ ວິຊາສະເພາະ ຈະມາຄິດໄລ່ ຄ່າສ້ອມແປງ

K ບໍລິສັດ ວິຊາສະເພາະ ສ້ອມແປງແລ້ວໆ, ຈະຄິດໄລ່ເອົາຈາກເງິນປະກັນ,
ຖ້າວ່າ: ຍັງເຫຼືອຈະສົ່ງເຈົ້າຄືນ / ຖ້າວ່າ: ບໍ່ພໍເຈົ້າຕ້ອງຈ່າຍຕື່ມ.

## 2 ໃຫ້ຮູ້ຈັກຄວາມສຳຄັນນີ້ໄວ້ດີໆ　大切(たいせつ)な言葉(ことば)を知(し)ろう

(1) ຊິກິຄິງ = Shikikin = ເງິນປະກັນ

ຫຼັງຈາກເຊັນສັນຍາແລ້ວໆ, ຕ້ອງຈ່າຍໃຫ້ ໂອ້ຍະ-ພືໂດຊັ່ງ. ພ້ອມດ້ວຍເງິນຄ່າເຊົ່າເຮືອນ

ປະມານສອງສາມເດືອນ. (ສັນຍາແຕ່ລະຢ່າງຈະບໍ່ຄືກັນ) ເງິນດັ່ງກ່າວນີ້, ເວລາເຊົາເຊົ່າ ເອົາໄວ້

ສ້ອມແປງ ບ່ອນເພພັງ ບ່ອນເປິະເປື້ອນຄືນໃໝ່. ຫຼື ບໍ່ຈ່າຍຄ່າເຮືອນ, ຈະເອົາເງິນຈຳນວນນີ້.

(2) ຊິກິຄິງໂນະເຄຊັ່ງ = Shikikin no keisan = ການຄິດໄລ່ເງິນປະກັນ,

ເວລາເຊົາເຊົ່າເຮືອນ,ຈະຄິດໄລ່ ຈາກເງິນຈຳນວນນີ້, ເປັນຄ່າສ້ອມແປງ ແລະ ຄ່າທຳຄວາມ

ສະອາດ. ຖ້າວາ: ເງິນປະກັນ(ຊິກິຄິງ) ຍັງເຫຼືອຈະສົ່ງເຈົ້າຄືນ, ຖ້າວ່າບໍ່ພໍຈະໃຫ້ເຈົ້າຈ່າຍຕື່ມ.

(3) ເກັນໂຢ້ໄຄພຶກຶ = Genjyo kaifyku = ແປງຄືນ ໃຫ້ກັບສູ່ ສະພາບເດີມ

ເວລາເຊົ່າເຮືອນ, ເຮືອນຢູ່ໃນສະພາບໃດ ໃຫ້ກັບຄືນສູ່ສະພາບເດີມ ເອີ້ນວ່າ: ເກັນໂຢໄຄພຶກຶ

ຫ້ອງໃດເປື້ອນ ຕ້ອງທຳຄວາມສະອາດ ບ່ອນໃດເພພັງ ຕ້ອງສ້ອມແປງຄືນ ແລະ ເກັບເຄື່ອງ

ອອກໃຫ້ໝົດທຸກໆຢ່າງ.

(4) ບຸກເກັ້ງກັກກຶນິ່ງ = Bukken kakunin = ກວດກາເຮືອນ ຫຼື ຫ້ອງເຊົ່າ

ບຸກເກັ້ງກັກກຶນິ່ງ ແປວ່າ: ກວດເບິ່ງຫ້ອງເຊົ່າ ຫຼື (ເຮືອນ) ບ່ອນໃດເປື້ອນ, ມີຮອຍຂີດ ຫຼື

## 3 ໃຫ້ຮູ້ຈັກເລື່ອງສຳຄັນນີ້ໄວ້ດີໆ 大切(たいせつ)なことを知(し)ろう

ຜູ້ໃຫ້ເຊົ່າເຮືອນ, ແມ່ນ (ໂອ້ສິກະ-ຟີໂດຊັ່ງ) ເປັນຜູ້ຂຽນ

ຜູ້ເຊົ່າ (ເປັນຜູ້ຈ່າຍຄ່າເຊົ່າເຮືອນ) (ເຈົ້າ) ເປັນຜູ້ຂຽນ

### A ຕ້ອງເຮັດສັນຍາເຊົ່າເຮືອນ

○ ໃນໃບສັນຍາ, ຈະຂຽນຂໍ້ສັນຍາຕ່າງໆໄວ້

○ ຂໍ້ສັນຍາທີ່ຂຽນໄວ້, ມີແຕ່ອັນສຳຄັນ. ໃຫ້ອ່ານເບິ່ງແທ້ໆ.

### B ເງິນປະກັນ ໂອ້ສິກະ-ຟີໂດຊັ່ງ ເປັນຜູ້ເກັບມ້ຽນ

### C ກ່ອນຈະເຂົ້າໄປຢູ່ເຮືອນ ຫຼື ຫ້ອງເຊົ່າ ເຈົ້າຕ້ອງໄປກວດເບິ່ງກ່ອນ, (ບ່ອນໃດເພພັງ ບ່ອນໃດເປື້ອນ ຕ້ອງເບິ່ງ ນຳກັນ ກັບ ໂອ້ສິກະ - ຟີໂດຊັ່ງ)

○ ເຈົ້າ ກັບ ໂອ້ສິກະ-ຟີໂດຊັ່ງ ຕ້ອງໄປກວດເບິ່ງຫ້ອງ, ມີບ່ອນເພພັງ, ມີບ່ອນເປື້ອນ, ຫຼື ບໍ່.

○ ຖ່າຍຮູບຫ້ອງເຮືອນໃສ່ວັນທີໄວ້ພ້ອມ. ເພື່ອປ້ອງກັນ ການຜິດຖຽງກັນ ຕາມພາຍຫຼັງ.

### D ເຊົ່າແລ້ວ ຕ້ອງເຂົ້າໄປ (ຢູ່)

○ (ເຈົ້າ) ຢູ່ເຮືອນ ຫຼື ຫ້ອງເຊົ່າໄປຕາມທຳມະດາ, ຖ້າເກີດມີບ່ອນເພພັງ ຫຼື ມີບ່ອນເປື້ອນ, ເກີດຂຶ້ນຕາມທຳມະຊາດນັ້ນ, ຄ່າສ້ອມແປງ ແມ່ນເງິນຂອງ (ໂອ້ສິກະ).

○ ຖ້າ (ເຈົ້າ) ຢູ່ເຮືອນ ຫຼື ຫ້ອງເຊົ່າໄປ,ແບບບໍ່ຮັກສາ, ເຮັດເພພັງ ຫຼື ເປິະເປື້ອນ, ຄ່າສ້ອມແປງ (ເຈົ້າ) ຕ້ອງເປັນຜູ້ຈ່າຍ.

○ ໃບສັນຍາເຊົ່າ ຫຼື (ສັນຍາພິເສດ) ຖ້າໄດ້ຂຽນໄວ້, ຜູ້ເຊົ່າຕ້ອງໄດ້ຈ່າຍເງິນປະກັນໄວ້. ສະນັ້ນ, ຈົ່ງອ່ານເບິ່ງໃບສັນຍາແທ້ໆ.

○ ຢູ່ຍີ່ປຸ່ນ ຄວາມຊຸ່ມຊື້ນຫຼາຍ, ຈຸດພິເສດ ໃຫ້ລະວັງ ນ້ຳ ຫຼື ລະວັງ ຢ່າໃຫ້ ຕິກໂໝະ.

○ ຢູ່ຍີ່ປຸ່ນ ຖ້າວ່າ: ເຈົ້າໃຊ້ເຮືອນ ຫຼື ຫ້ອງເຊົ່າ ບໍ່ລະວັງ ດັ່ງຕໍ່ໄປນີ້ (ເຈົ້າ) ຕ້ອງໄດ້ເສັຍເງິນ.

〈 ກ່ຽວກັບ ພື້ນເຮືອນ ( ສາດ - ພົມປູພື້ນ ຫຼື ອື່ນໆ ) 〉

- ຢ່າໃຫ້ ເຄື່ອງດື່ມ, ຂອງກິນ, ຕົກລົງໃສ່ພົມປູພື້ນ, ເກີດດ່າງ ຫຼື ຕົກໂໝະ,
  (ໃຫ້ທຳຄວາມສະອາດເລື້ອຍໆ)
- ກ້ອງຕູ້ເຢັນ, ມັກເກີດສະໜິມ (ໃຫ້ທຳຄວາມສະອາດເລື້ອຍໆ)
- ຈະຍ້າຍເຮືອນ, ເວລາເຄື່ອນຍ້າຍຂອງໜັກ (ຢ່າ-ຫ້ຂູດພື້ນເຮືອນ)
- ຝົນຕົກນ້ຳຊຶມ, ພື້ນເຮືອນມີສີດ່າງດ້າວ, ມີກິ່ນເໝັນ (ໃຫ້ຟ້າວເຊັດນ້ຳໄວໆ)

〈 ກ່ຽວກັບ ຝາໄມ້, ຝາເຈ້ຍ, (ຜ້າກັ້ງ) ເພດານ ຫຼື ອື່ນໆ 〉

- ຝາເຮືອນຄົວ, ເພດານ, ມີນ້ຳມັນ ຫຼື ຂີ້ຝຸ່ນຕິດ (ໃຫ້ທຳຄວາມສະອາດໃຫ້ດີໆ)
- ຄວນກອກຢາ, ຈະຕິດຝາເຮືອນແລ້ວອອກສີດ່າງ ແລະ ມີກິ່ນ
- (ຖ້າເຈົ້າ) ຕອກຕະປູ ຫຼື ຫັນຕະປູກຽວໃສ່ ຈະມີຮູ (ຢ່າເຮັດໃຫ້ມີຮູ)
- (ຖ້າເຈົ້າ) ຕິດໂຄມໄຟໃສ່ເພດານ ຫຼື (ສ່ງສະຫວ່າງ) ເພດານຈະມີຮູ
- (ຖ້າເຈົ້າ) ຂຽນແຕ້ມໃສ່ຝາເຮືອນ ຫຼື ຂຽນໃສ່ປະຕູ ຈະພາໃຫ້ເປື້ອນ
- (ຖ້າເຈົ້າ) ເຫັນຝາ, ລຸ່ມປ່ອງຢ້ຽມ, ພື້ນເຮືອນ, ຊຶມປຽກ, ຕົກໂໝະ ຫຼື ເກີດສະໜິມ,
  ບໍ່ໃຫ້ເຊັດ ແລະ ບໍ່ໃຫ້ຖູ, ໃຫ້ຟ້າວບອກ (ໂອ້ສິກະ-ຟິໂດຊັ່ງ) ໄວໆ.
  ເປີດແອອຸ່ນ ຕົ້ມ ໂອຟີໂລ ແລ້ວ, ໃຫ້ເປີດປ່ອງຢ້ຽມໄວ້ ເພື່ອປ່ຽນເອົາອາກາດ.
  ຖ້າບໍ່ເປີດປ່ອງຢ້ຽມ, ຈະພາໃຫ້ເກີດອາການ ປຽກຊຸ່ມ. (ຖ້າເຫັນ ໃຫ້ຟ້າວເຊັດໄວໆ)
- (ຖ້າເຈົ້າ) ເຫັນນ້ຳແອເຢັນ ໄຫຼລົງມາໃສ່ຝາເຮືອນ, ພື້ນເຮືອນ, ຕົກໂໝະ ຫຼື ເກີດສະໜິມ,
  ບໍ່ໃຫ້ເຊັດ ແລະ ບໍ່ໃຫ້ຖູ, ໃຫ້ຟ້າວບອກ (ໂອ້ສິກະ-ຟິໂດຊັ່ງ) ໄວໆ.
- ຊື້ສັດມາລ້ຽງຢູ່ໃນເຮືອນ, ຈະເຮັດໃຫ້ພື້ນເຮືອນ, ຝາເຮືອນເປັນຂີດ, ມີກິ່ນ ແລະອື່ນໆ
  (ຊື້ສັດມາລ້ຽງໄດ້ ຫຼື ບໍ່ ໃຫ້ຖາມ (ໂອ້ສິກະ-ຟິໂດຊັ່ງ) ກ່ອນ. ຢູ່ໃນໃບສັນຍາເຊົ່າເຮືອນ
  ຈະມີຂໍ້ສັນຍາກ່ຽວກັບສັດລ້ຽງ).

〈 ກ່ຽວກັບ ເສົາເຮືອນ, ປະຕູ, ຝາເລື່ອນ ແລະ ອື່ນໆ 〉

- (ຖ້າເຈົ້າ) ຕອກຕະປູ ຫຼື ຫັນຕະປູກຽວ ໃສ່ເສົາ ຈະເປັນຮູ. (ຢ່າຕອກຕະປູໃສ່ເສົາເຮືອນ)
- (ຖ້າເຈົ້າ) ເຮັດເປັນມີຮອຍຂີດ ຫຼື ຂຽນໃສ່ຝາເຮືອນ
- ຊື້ສັດມາລ້ຽງ, ສັດຈະຂູດພື້ນ ຫຼື ຝາເຮືອນເປັນຮອຍ ຫຼື ມີກິ່ນເໝັນ ແລະ ອື່ນໆ.

〈 ກ່ຽວກັບ ອຸປະກອນ, ກະແຈ, ສວນຄົວ ແລະ ອື່ນໆ 〉

- ບ່ອນວາງເຕົາແກສ໌, ພັດລົມດູດອາກາດ, ມີນ້ຳມັນຕິດ ຫຼື ເປື້ອນ (ໃຫ້ທຳຄວາມສະອາດດີໆ)
- ໂອຟີໂລ, ສ້ວມຖ່າຍ, ອ່າງລ້າງ ແລະ ບ່ອນອື່ນໆ, ເປື້ອນຫຼາຍ ຈະຕົກໂໜະ ເກີດສະໜິມ (ໃຫ້ທຳຄວາມສະອາດໃຫ້ດີໆ)
- (ເຈົ້າ) ຢ່າເຮັດກະແຈເຮືອນເສັຍຫາຍ ຫຼື ຢ່າເຮັດກະແຈປະຕູເຮືອນເພ,
- (ເຈົ້າ) ຢ່າປະປ່ອຍ ໃຫ້ຫຍ້າຂຶ້ນຢູ່ໃນສວນຄົວຫຼາຍ (ໃຫ້ຖາງ ແລະ ຫຼົກເລື້ອຍໆ)

## E ຈະອອກຈາກ ເຮືອນ ຫຼື (ຍົກຍ້າຍ) ຕ້ອງໃຫ້ບອກ ໂອ້ສືກະ-ຟືໂດຊັ່ງ.

○ ກ່ອນຈະອອກຈາກເຮືອນ ຫຼື ຫ້ອງເຊົ່າ, (ເຈົ້າ) ຕ້ອງບອກ ໂອ້ສືກະ-ຟືໂດຊັ່ງ ກ່ອນລ່ວງໜ້າ.

○ ຈະອອກຈາກເຮືອນ ຫຼື ຫ້ອງເຊົ່າມື້ໃດ (ກ່ອນຈັກເດືອນ) ຕ້ອງໃຫ້ບອກ ໂອ້ສືກະ-ຟືໂດຊັ່ງ ຕາມສັນຍາໄວ້. (ໃນໃບສັນຍາໄດ້ຂຽນໄວ້ແລ້ວ).

○ ຖ້າວ່າ (ຈົ້າ) ບໍ່ບອກ ໂອ້ສືກະ-ຟືໂດຊັ່ງ ຫຼື ບອກບໍ່ຖືກຕາມສັນຍາ, ຈະໄດ້ເສັຍເງິນ, ຈົ່ງລະວັງດີໆດ້ວຍ.

## F ຈະຍ້າຍອອກຈາກເຮືອນ ຫຼື ຫ້ອງເຊົ່າ ຕ້ອງຂົນເຄື່ອງອອກໃຫ້ໝົດ

○ ຈະເຊົາເຊົ່າ ຫຼື ຈະຍົກຍ້າຍ ໃຫ້ນັບຖືຂໍ້ສັນຍາດີໆ,

- (ເຈົ້າ) ເອົາເຄື່ອງເຂົ້າມາ, ຕ້ອງເອົາອອກໃຫ້ໝົດທຸກໆຢ່າງ,
- (ເຈົ້າ) ຕ້ອງເອົາເຄື່ອງເຮືອນອອກໃຫ້ໝົດ ປະໄວ້ໃນຫ້ອງບໍ່ໄດ້ ແລະ ມ້ຽນຂີ້ເຫຍື້ອ,
- ທຳຄວາມສະອາດຫ້ອງໃຫ້ງາມຄືເກົ່າ.

ກ່ອນຈະອອກຈາກເຮືອນ ຫຼື ຫ້ອງເຊົ່າ, ຕ້ອງມີການ ກວດກາ ນໍາກັນ,

○ (ເຈົ້າ) ຕ້ອງເອົາເຄື່ອງເຮືອນອອກຈາກຫ້ອງໃຫ້ໝົດ, ທໍາຄວາມສະອາດຫ້ອງໃຫ້ດີໆ, ຫ້ອງໃດເພພັງຕ້ອງແປງຄືນ.

○ (ເຈົ້າ) ປະເຄື່ອງເຮືອນໄວ້ໃນຫ້ອງ (ໂອ້ສີກະ-ຟີໂດຊັ່ງ) ຈ້າງຄົນເອົາໄປຖິ້ມ, ເຈົ້າເປັນຜູ້ຈ່າຍ.

○ ກ່ອນ (ເຈົ້າ) ຈະເຂົ້າມາຢູ່ເຮືອນ,ໄດ້ທໍາຄວາມສະອາດແລ້ວ, ເວລາຈະອອກໜີ, ເຈົ້າທໍາຄວາມສະອາດບໍ່ດີ, ຈະຮ້ອງບໍລິສັດ ວິຊາສະເພາະ ມາທໍາຄວາມສະອາດ.

○ ບ່ອນໃດເພພັງ (ເຈົ້າ) ບໍ່ແປງຄືນ ຈະຮ້ອງບໍລິສັດ ວິຊາສະເພາະ ມາສ້ອມແປງ.

○ ບໍລິສັດ ວິຊາສິເພາະ ເອົາເຄື່ອງເຮືອນໄປຖິ້ມ, ທໍາຄວາມສະອາດ ແລະສ້ອມແປງແລ້ວໆ, ຈະຄິດໄລ່ ເອົາເງິນປະກັນ, ຢູ່ນໍາ ໂອ້ສີກະ-ຟີໂດຊັ່ງ. ຖ້າບໍ່ພໍ (ເຈົ້າ) ຕ້ອງເປັນຜູ້ຈ່າຍ.

H ກ່ອນຈະອອກຈາກເຮືອນ ຫຼື ຫ້ອງເຊົ່າ, ຕ້ອງມີການ ກວດກາ ນໍາກັນ (ບ່ອນໃດເປື້ອນ ບ່ອນໃດເພພັງ ຕ້ອງເບິ່ງນໍາກັນກັບ ໂອ້ສີກະ - ຟີໂດຊັ່ງ)

○ (ເຈົ້າ) ທໍາຄວາມສະອາດ ແລະ ສ້ອມແປງແລ້ວໆ, ( ໂອ້ສີກະ-ຟີໂດຊັ່ງ ) ກັບ ເຈົ້າ, ຕ້ອງໄປກວດເບິ່ງ ນໍາກັນອີກ.

○ ຖ້າ (ເຈົ້າ) ໃຊ້ຫ້ອງຢູ່ຕາມທໍາມະດາ, ເກີດມີບ່ອນເປື້ອນ ຫຼື ເພພັງ ຂຶ້ນມາ (ໂອ້ສີກະ) ຈະອອກເງິນຄ່າສ້ອມແປງເອງ. ນອກຈາກນັ້ນ, ຖ້າເຈົ້າເຮັດເປື້ອນ ຫຼື ເຮັດເພພັງ (ເຈົ້າ) ຕ້ອງເປັນຜູ້ຈ່າຍ.

○ ໃບສັນຍາເຊົ່າ ຫຼື (ສັນຍາພິເສດ) ບົ່ງເງິນໄວ້ຕາມສັນຍາແບບໃດ, ຜູ້ສັນຍາ, ກໍ ຄື (ເຈົ້າ) ຕ້ອງໄດ້ຈ່າຍເງິນປະກັນໄວ້.

○ ໃຜຈະໄດ້ຈ່າຍເທົ່າໃດ (ເຈົ້າ) ກັບ ໂອ້ສີກະ-ຟີໂດຊັ່ງ ຕ້ອງໄປເບິ່ງຫ້ອງແລ້ວ, ຄິດໄລ່ນໍາກັນ.

○ ຖ້າວ່າ: ໄປເບິ່ງຫ້ອງນໍາກັນບໍ່ໄດ້, (ເຈົ້າ) ຕ້ອງເບິ່ງຄົນດຽວ, ແລ້ວຂຽນໃສ່ເຈັ້ຍ ອະທິບາຍແຕ່ລະຫ້ອງໃຫ້ລະອຽດແລ້ວ, ປະໄວ້ໃນຫ້ອງ. ແລະ ໃຫ້ຖ່າຍຮູບ ໃສ່ວັນທີໄວ້ພ້ອມ.

**I ຈະຮ້ອງບໍລິສັດ ວິຊາສະເພາະ ມາສ້ອມແປງຫ້ອງຄືນ ໃຫ້ຢູ່ໃນສະພາບເດີມ**

○ (ເຈົ້າ) ບໍ່ສ້ອມແປງ / ແປງຄືນບໍ່ໄດ້ ຈະຮ້ອງ ບໍລິສັດ ວິຊາສະເພາະ ມາສ້ອມແປງ.

**J ບໍລິສັດ ວິຊາສະເພາະ ຈະມາຄິດໄລ່ ຄ່າສ້ອມແປງ**

○ ການສ້ອມແປງຫ້ອງໃຫ້ຄືນຄືເກົ່າ ຈຳເປັນຕ້ອງໃຊ້ເງິນ ຫຼື ຖ້າ (ເຈົ້າ) ປະເຄື່ອງໄວ້ໃນຫ້ອງ, ຄ່າຈ້າງເອົາໄປຖິ້ມ ຈະຄິດໄລ່ ເອົາເງິນນຳເຈົ້າ.

○ (ໂອ້ສິກະ-ຟິໂດຊັ່ງ) ຈະຮ້ອງ ບໍລິສັດທຳຄວາມສະອາດ, ບໍລິສັດສ້ອມແປງ ແລະ ບໍລິສັດເອົາເຄື່ອງໄປຖິ້ມ, ມາຈັດການໃຫ້ແລ້ວ, ຈະຄິດໄລ່ເອົາເງິນນຳເຈົ້າ.

**K ບໍລິສັດ ວິຊາສະເພາະ ສ້ອມແປງແລ້ວໆ, ຈະຄິດໄລ່ເອົາຈາກເງິນປະກັນ, ຖ້າວ່າ: ຍັງເຫຼືອຈະສົ່ງເຈົ້າຄືນ / ຖ້າວ່າ: ບໍ່ພໍເຈົ້າຕ້ອງຈ່າຍຕື່ມ.**

○ ເງິນປະກັນນັ້ນ, ຫຼັງຈາກເຈົ້າອອກຈາກເຮືອນແລ້ວ, (ໂອ້ສິກະ-ຟິໂດຊັ່ງ) ຈະສົ່ງຄືນໃຫ້ເຈົ້າ. ແຕ່ວ່າ: ຖ້າເຈົ້າປະເຄື່ອງຂອງໄວ້ໃນເຮືອນ, ຄ່າຈ້າງເອົາເຄື່ອງໄປຖິ້ມ, ຈະເອົາເງິນປະກັນຈ່າຍ.

○ ຄ່າສ້ອມແປງ, ຈະເອົາຈາກເງິນ ປະກັນຈ່າຍ, ແລ້ວ ຈະຄິດໄລ່ສົ່ງຄືນໃຫ້ (ເຈົ້າ).

○ ການສ້ອມແປງຈຳເປັນຕ້ອງໃຊ້ເງິນຫຼາຍ, ເງິນປະກັນບໍ່ພໍ, (ເຈົ້າ) ຕ້ອງໄດ້ຈ່າຍເງິນໃຫ້ (ໂອ້ສິກະ-ຟິໂດຊັ່ງ) ອີກ.

## ຖ້າວ່າ: ຕົກລົງກັນບໍ່ໄດ້, ຕ້ອງໂອ້ລົມກັນ

- ເງິນທີ່ (ເຈົ້າ) ຈະໄດ້ຈ່າຍຄ່າສ້ອມແປງຄືນ, (ເຈົ້າ) ອອກຈາກເຮືອນໄປແລ້ວ, ບໍລິສັດ ທຳຄວາມສະອາດ, ບໍລິສັດສ້ອມແປງເຮືອນ ແລະອື່ນໆຈະມາຄິດໄລ່ແລ້ວ,ຈະຮູ້ຈັກຕາມຫຼັງ.
- ຂໍເອົາໃບລາຄາ ຄ່າທຳຄວາມສະອາດ, ຄ່າສ້ອມແປງບ່ອນເພພັງ, ນຳ (ໂອ້ສິກະ-ຟິໂດຊັ່ງ) ແດ່.
-「C ກ່ອນຈະເຂົ້າໄປຢູ່ເຮືອນຕ້ອງກວດ」 ແລະ 「H ກ່ອນຈະອອກໜີຈາກເຮືອນຕ້ອງກວດ」 ສະພາບຂອງຫ້ອງເຮືອນຄືເກົ່າບໍ ແລະ ໃຫ້ອ່ານເບິ່ງໃບລາຄາ ຄ່າສ້ອມແປງຄືນໃຫ້ດີໆດ້ວຍ.
- ເບິ່ງໃບລາຄາແລ້ວ, ບໍ່ພໍໃຈໃຫ້ຕິດຕໍ່ (ໂອ້ສິກະ-ຟິໂດຊັ່ງ). ແລ້ວໃຫ້ອະທິບາຍເນື້ອສູ່ກັນຟັງ.
- ຢູ່ເຮືອນມາດົນແລ້ວ, ເກີດເປື້ອນເປິະຕາມທຳມະຊາດນັ້ນ, (ໂອ້ສິກະ-ຟິໂດຊັ່ງ) ເປັນຜູ້ຈ່າຍ. ຖ້າບໍ່ແມ່ນດັ່ງທີ່ກ່າວຂ້າງເທິງນີ້, (ເຈົ້າ) ເຈົ້າເຮັດເປື້ອນ, ເຈົ້າຕ້ອງເປັນຜູ້ຈ່າຍເງິນ.